# ນາງຄົນງາມ ແລະ ສັດປະຫລາດ




ເທບນິຍາຍດັງຂອງໂລກ

# ນາງຄົນງາມ ແລະ ສັດປະຫລາດ

ສຸດເລື່ອງໃນຫົວດຽວ

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

ແປ, ຮຽບຮຽງ ແລະ ຮູບປະກອບ ໂດຍ :

ຈັນທະວົງ ແສນອາມາດມົນຕີ

ສະຫນັບສະຫນູນການພິມ ໂດຍ :

ຄອບຄົວ ທ່ານ ຄຳຂຽນ ແລະ

ນາງ ທອງເລື່ອນ ສີສຸລາດ

ພິມຄັ້ງທີ 1 : 19/07/2005

ພິມທີ່ : ໂຮງພິມສະຫວ່າງການພິມ

ຕາມ : 88 _91/ພຈ/0062005

ຈຳນວນ : 2000 ຫົວ

© ສະຫງວນລິຂະສິດ :

ຈັນທະວົງ ແສນອາມາດມົນຕີ



01 JAN 2009

# ຄຳນຳ

ນາງຄົນງາມ ແລະ ສັດປະຫລາດ ແມ່ນເທບນິຍາຍເກົ່າແກ່ເລື່ອງໜຶ່ງ ທີ່ມີທັງຄວາມແປກປະຫລາດ, ອັດສະຈັນ ແລະ ມີຊີວິດຊີວາ ເຊິ່ງ ຄົນທັງຫລາຍ ນິຍົມອ່ານ ແລະ ມັກຟັງການເລົ່າ. ເທບນິຍາຍເລື່ອງນີ້ໄດ້ ຖືກແປເປັນຫລາຍພາສາ, ເນື້ອໃນ ຈຶ່ງໄດ້ມີການປ່ຽນແປງ ໄປຕາມ ແຕ່ລະຍຸກ ສະໄໝ ແລະ ຕາມ ວັດທະນະທຳຂອງແຕ່ລະ ປະເທດ .

ນາງຄົນງາມ ແລະ ສັດປະຫລາດ ແມ່ນຜົນງານອັນທຳອິດທີ່ຜູ້ຂຽນໄດ້ນຳສະເໜີອອກສູ່ສາຍຕາຂອງຜູ້ອ່ານ ເພື່ອສົ່ງເສີມການອ່ານເປັນພາສາລາວ ເຊິ່ງຜູ້ຂຽນຄິດວ່າ ທັງເດັກ ແລະ ຜູ້ໃຫຍ່ ອາດສົນໃຈຢາກອ່ານ.

ການສະໜັບສະໜູນ ແລະ ຕຳນິສົ່ງຂ່າວ ຂອງຜູ້ອ່ານຄືກຳລັງໃຈ ຊ່ວຍເຮັດໃຫ້ຜູ້ຂຽນໄດ້ສະເໜີເລື່ອງອື່ນອີກໃນຕໍ່ໜ້າ.

22 ທັນວາ 2004

ຈັນທະວົງ ແສນອາມາດມົນຕີ

ບຸນສົ່ງ ແກ້ວບົວສາຍ
ສ. ສາ.

# ນາງຄົນງາມ ແລະ ສັດປະຫລາດ





ບຸນສົ່ງ ແກ້ວບົວສາຍ
ສ. ສາ.

ໃນອະດີດຕະການ ອັນດົນນານ ໄດ້ມີພໍ່ຄ້າຜູ້ຮັ່ງມີທີ່ສຸດຄົນໜຶ່ງ ອາໄສຢູ່ ປະເທດແສນໄກແຫ່ງໜຶ່ງ . ລາວມີລູກຊາຍ ຫົກຄົນ ແລະ ລູກສາວ ອີກຫົກຄົນ .

ພໍ່ຄ້າຄົນນັ້ນ ເຖິງຈະຮູ້ສຶກວ່າ ຕົນເອງບໍ່ມີເງິນຄຳຫລວງຫລາຍພາຍມາກໍຕາມ, ແຕ່ຍາມໃດກໍໄດ້ຊື້ຂອງຂວັນມາຕ້ອນມາຝາກ ພວກລູກທຸກໆເທື່ອ ຕາມທີ່ພວກເຂົາເຈົ້າໄດ້ຮ້ອງຂໍ .

ຕໍ່ມາ ໄດ້ມີເຄາະຮ້າຍເກີດຂຶ້ນກັບຄອບຄົວພໍ່ຄ້າຜູ້ນັ້ນຊ້ຳແລ້ວຊ້ຳອີກ . ຕົກມາວັນໜຶ່ງ, ໄຟໄດ້ໄໝ້ເຮືອນຂອງລາວ ພ້ອມດ້ວຍເຄື່ອງຂອງທຸກຢ່າງທີ່ຢູ່ໃນນັ້ນ ຈົນເຫລືອແຕ່ເຖົ່າຖ່ານກອງຢູ່ເທິງ ໜ້າດິນ .

ຈາກນັ້ນມາບໍ່ດົນ, ພໍ່ຄ້າຜູ້ນັ້ນກໍສູນເສຍກຳປັ່ນທຸກລຳທີ່ອອກເດີນແລ່ນທຳມາຄ້າຂາຍ ໃນທ້ອງທະເລອັນກວ້າງໃຫຍ່ ຍ້ອນຖືກໂຈນສະຫລັດປຸ້ນ, ຫລົ້ມ ແລະ ຈົມລົງນ້ຳທະເລ ຫລື ຖືກໄຟໄໝ້. ບໍ່ພຽງແຕ່ເທົ່ານັ້ນ, ລາວພັດຍັງໄດ້ຍິນຂ່າວ

ວ່າຄົນຮັບໃຊ້ທີ່ລາວໄວ້ເນື້ອເຊື່ອໃຈ ແລະ ສົ່ງໄປ ຄ້າຂາຍຢູ່ຕ່າງແດນກໍບໍ່ຊື່ສັດຕໍ່ລາວເຫມືອນກັນ. ຈາກສະພາບທີ່ເປັນຄົນເຄີຍມີຊັບສິນຫລວງ ຫລາຍພາຍມາກໃນເມື່ອກ່ອນ, ສຸດທ້າຍ ພໍ່ຄ້າ ຜູ້ຮັ່ງມີຜູ້ນັ້ນກໍໄດ້ກາຍເປັນຄົນທຸກຍາກອະນາຖາ ຢ່າງໄວວາ .



ໄຟໄຫມ້ເຮືອນພໍ່ຄ້າ



ກຳປັ່ນຫລາຍລຳທີ່ໄປຄ້າແດນໄກໄດ້ຫລົ້ມຈົມລົງທະເລ

ຊັບສິນທີ່ລາວຍັງເຫລືອ ກໍມີແຕ່ເຮືອນນ້ອຍຫລັງໜຶ່ງ ເຊິ່ງຕັ້ງຢູ່ບ່ອນເປົ່າປ່ຽວຫ່າງໄກ ຈາກຕົວເມືອງ ຫລາຍພໍສົມຄວນ .

ໃນເບື້ອງຕົ້ນພວກລູກສາວຂອງລາວກໍຫວັງວ່າພວກໝູ່ເພື່ອນຂອງພວກເຂົາຈະໃຫ້ເຂົາເຈົ້າໄດ້ພັກເຊົານຳ ; ສຸດທ້າຍ ພວກໝູ່ເພື່ອນຂອງເຂົາເຈົ້າ ກໍບໍ່ມີຜູ້ໃດສົນໃຈນຳ . ກ່ອນໜ້ານັ້ນພວກໝູ່ເພື່ອນຂອງເຂົາເຈົ້າກໍມີແຕ່ຊັກຊວນ

ໃຫ້ເຂົາເຈົ້າໃຊ້ຊີວິດແບບໃຊ້ຈ່າຍຟຸມເຟືອຍ, ຍາມຕົກທຸກໄດ້ຍາກມາບໍ່ມີໝູ່ເພື່ອນຄົນໃດສະແດງເຈດຕະນາຢາກໃຫ້ການຊ່ວຍເຫລືອແກ່ພວກເຂົາເຈົ້າ .

ພວກເຂົາເຈົ້າ ບໍ່ມີຊັບສິນອັນໃດເຫລືອຕິດໂຕຈັກອັນ, ເງິນກໍບໍ່ມີ, ແມ່ນແຕ່ຈະພາກັນເດີນທາງໄປຢູ່ເຮືອນຫລັງນ້ອຍຕັ້ງຢູ່ຕີນປ່າ ໃນເຂດນອກເມືອງກໍທັງຍາກ .

ຍ້ອນຕົກຢູ່ໃນສະພາບ ອັດຕະຄັດ ຂາດເຂີນເງິນຄຳ, ຈຶ່ງບໍ່ສາມາດ ມີຄົນຮັບໃຊ້ ເໝືອນແຕ່ກ່ອນ, ບັນດາສາວໆເອື້ອຍນ້ອງຈຳຕ້ອງໄດ້ ພາກັນເຮັດວຽກງານໜັກ, ພວກລູກຊາຍ ກໍພາກັນ ບຸກເບີກເນື້ອທີ່ດິນປູກຝັງ ເພື່ອຫາລ້ຽງຊີບ .

ເຖິງແມ່ນວ່າ ພວກເຂົາເຈົ້າ ໄດ້ມີການນຸ່ງຖືແບບຂາດສ້ອຍ ແລະ ຢູ່ກິນຢ່າງກະທັດລັດງ່າຍດາຍ ທີ່ສຸດກໍຕາມ, ບັນດາສາວໆ ເອື້ອຍນ້ອງ ທັງຫ້າຄົນ ກໍຍັງບໍ່ຢຸດເຊົາ ຢາກມີຊີວິດ ແບບຟຸມເຟືອຍ ເໝືອນດັ່ງແຕ່ກ່ອນ, ພວກເຂົາເຈົ້າ ຍັງ

ຢາກໃຝ່ຝັນຫາຊີວິດທີ່ມ່ວນຊື່ນລື່ນເລີງ ແບບຄົນມີເງິນ, ມີແຕ່ນ້ອງສາວຫລ້າຄົນດຽວ ທີ່ໄດ້ພະຍາຍາມເປັນຄົນກ້າຫານ; ຄວາມຈິງນາງ ກໍມີຄວາມໂສກເສົ້ານຳຊັບສິນຂອງພໍ່ທີ່ໄດ້ເສຍ ຫາຍໄປບໍ່ຕ່ຳກ່ວາພວກອ້າຍ ແລະ ເອື້ອຍ; ແຕ່ເວລາຜ່ານໄປບໍ່ດົນ, ນາງກໍຕັ້ງໃຈໄດ້ ແລະ ມີຈິດໃຈແຈ່ມໃສໂດຍທຳມະຊາດທີ່ນາງເປັນມາ ແຕ່ກຳເນີດ.

24/7 VII

ນາງສາວຫລ້າຕັ້ງໃຈເຮັດວຽກງານດ້ວຍ ຄວາມຂະຫຍັນຂັນແຂງ ທັງມັກຊວນພວກອ້າຍ ແລະ ເອື້ອຍສ້າງບັນຍາກາດເບີກບານມ່ວນຊື່ນ ດ້ວຍການຮ້ອງເພງ ແລະ ຟ້ອນກັບນາງ.

ຫ້າມຈຳໜ່າຍ

ນາງບໍ່ໄດ້ໂສກເສົ້າແບບສິ້ນຫວັງ ເຫມືອນດັ່ງພວກເອື້ອຍຂອງນາງ ; ແຕ່ວ່າ ພວກເອື້ອຍບໍ່ມີໃຜຢາກຮ້ອງເພງ ຫລື ຢາກຟ້ອນກັບນາງ.

ພວກເອື້ອຍມັກເວົ້າໃສ່ນ້ອງສາວຫລ້າວ່າ :

" ຕົກທຸກໄດ້ຍາກແບບນີ້ ຈັ່ງແມ່ນສົມນໍ້າໜ້າມັນເດ ! " , ແຕ່ນ້ອງສາວຫລ້າ ກໍບໍ່ໄດ້ເວົ້າຫຍັງຕອບພວກເອື້ອຍ . ໂດຍທໍາມະຊາດ, ນ້ອງສາວຫລ້າເປັນຄົນງາມ ໜ້າຮັກ ແລະ ສະຫລຽວສະຫລາດກ່ວາພວກເອື້ອຍຂອງລາວຫລາຍ, ຍ້ອນຄວາມໜ້າຮັກເຊັ່ນນັ້ນ ຜູ້ຄົນທັງຫລາຍຈຶ່ງມັກຮ້ອງນາງວ່າ : " ນາງຫລ້າຄົນງາມ ຫລື ນາງຄົນງາມ ".



ສອງປີຕໍ່ມາ, ພໍ່ຂອງນາງ ໄດ້ຍິນຂ່າວວ່າ ກຳປັ່ນລຳໜຶ່ງ ໃນຫລາຍລຳ ທີ່ລາວຄິດວ່າ ຖືກ ສູນເສຍໄປນັ້ນ ໄດ້ກັບຄືນມາຈອດທຽບທ່າເຮືອ ດ້ວຍຄວາມປອດໄພ ທັງໄດ້ບັນທຸກສິນຄ້າ ມານຳ ເປັນຈຳນວນຫລວງຫລາຍ .

ເມື່ອໄດ້ຍິນເຊັ່ນນັ້ນ, ພວກລູກຊາຍ ແລະ ລູກສາວ ພາກັນຄິດອອກມາທັນທີວ່າ ຄວາມທຸກ ຍາກ ຂອງ ພວກເຂົາ ຈະໄດ້ຈົບສິ້ນໄປແລ້ວ, ຈຶ່ງ ເວົ້າກັບພໍ່ວ່າ ຢາກພາກັນ ກັບໄປໃຊ້ຊີວິດ ຢູ່ໃນ ເມືອງຄືນໃຫມ່ . ແຕ່ຜູ້ເປັນພໍ່ ມີຄວາມຮອບຄອບ ຫລາຍ ຈຶ່ງຮ້ອງຂໍ ໃຫ້ພວກລູກໆ ພາກັນຢູ່ເຮືອນ ນ້ອຍໃກ້ຕີນປ່າ ແຫ່ງນັ້ນໄປກ່ອນຊົ່ວໄລຍະໜຶ່ງ.

ພວກເອື້ອຍອ້າຍ ຂອງນາງສາວຫລ້າ ພາ ກັນຄິດວ່າ ພວກເຂົາເຈົ້າ ຈະໄດ້ເປັນຄົນລ້ຳລວຍ ເຫມືອນຄາວກ່ອນ, ມີແຕ່ນາງສາວຫລ້າຄົນດຽວ ທີ່ຍັງບໍ່ທັນແນ່ໃຈ . ພວກອ້າຍເອື້ອຍທຸກຄົນ ຟ້າວ ບອກໃຫ້ພໍ່ ຊື້ເຄື່ອງນຸ່ງ ຂອງຖີ ແລະ ເຄື່ອງປະດັບ ເອ້ເຄື່ອງແຕ່ງກາຍ ແນວລາຄາແພງມາໃຫ້ , ສ່ວນ

ວ່າ ນາງສາວຫລ້າ ບໍ່ໄດ້ຂໍໃຫ້ພໍ່ຊື້ຫຍັງມາໃຫ້ . ເມື່ອຜູ້ເປັນພໍ່ ສັງເກດເຫັນລູກສາວຫລ້າ ມິດງຽບຢູ່ ຈຶ່ງຖາມນາງວ່າ : " ນາງຄຶນງາມ ຂອງ ພໍ່ເອີຍ ! ລູກຢາກໃຫ້ພໍ່ຊື້ຫຍັງມາຕ້ອນ ? " . ນາງຄຶນງາມ ຕອບພໍ່ວ່າ : " ສິ່ງດຽວທີ່ລູກຢາກໄດ້ຈາກການເດີນ ທາງອອກຈາກບ້ານຂອງພໍ່ຄັ້ງນີ້ແມ່ນລູກຢາກໃຫ້ ພໍ່ຟ້າວກັບຄືນມາຮອດບ້ານຮອດເຮືອນດ້ວຍ ຄວາມປອດໄພດີທຸກປະການ " .

ຄຳຕອບດັ່ງກ່າວຂອງນາງຄຶນງາມໄດ້ເຮັດ ໃຫ້ພວກເອື້ອຍຂອງນາງຟັງບໍ່ມ່ວນຫູ ຈົນເກີດ ຄວາມລຳຄານທີ່ໄດ້ຍິນເຊັ່ນນັ້ນ. ພວກເອື້ອຍ ເຂົ້າໃຈວ່າ ນ້ອງສາວຫລ້າ ເວົ້າສຽດໃສ່ພວກຕົນ ທີ່ ໄດ້ບອກໃຫ້ພໍ່ ຊື້ແຕ່ແນວແພງໆມາໃຫ້ .

ເຖິງຢ່າງໃດກໍຕາມ, ຜູ້ເປັນພໍ່ ກໍຍິນດີ ແລະ ຊູຊີໃຫ້ລູກສາວຫລ້າບອກວ່າ ນາງຢາກໃຫ້ພໍ່ຊື້ ຫຍັງມາຕ້ອນ.

ເມື່ອເປັນເຊັ່ນນັ້ນ, ນາງຄຶນງາມ ຈຶ່ງຕອບ ພໍ່ ວ່າ : " ພໍ່ເອີຍ ! ຖ້າພໍ່ຢາກໃຫ້ລູກຂໍສິ່ງໃດສິ່ງໜຶ່ງ

ນຳພໍ່ນັ້ນ, ລູກຂໍໃຫ້ພໍ່ຖືດອກກຸຫລາບງາມໆ ດອກໜຶ່ງມາໃຫ້ລູກກໍໄດ້ແລ້ວ . ນັບແຕ່ພວກເຮົາຍ້າຍມາຢູ່ພີ້ລູກຍັງບໍ່ທັນໄດ້ເຫັນດອກກຸຫລາບສົດໆຈັກເທື່ອ, ລູກມັກດອກກຸຫລາບຫລາຍ ".

ພໍເມື່ອລົມກັບພວກລູກໆສຸດຄວາມແລ້ວ, ຜູ້ເປັນພໍ່ກໍອອກເດີນທາງເພື່ອໄປເບິ່ງເຮືອກຳປັ່ນຂອງລາວທີ່ບັນທຸກສິນຄ້າກັບຄືນມາຮອດແລ້ວ.



ຕະຫລອດໄລຍະ 6 ເດືອນ ທີ່ໄດ້ອອກຈາກບ້ານມາ, ພໍ່ຄ້າຜູ້ນັ້ນ ຮູ້ສຶກວ່າ ຕົນເອງ ຕົກຢູ່ໃນສະພາບ ທຸກຍາກ ເຫມືອນເດີມ ຍ້ອນໄດ້ ໃຊ້ຈ່າຍສິ້ນເປືອງພໍສົມຄວນ ແລະ ໄດ້ພົບຄວາມຫຍຸ້ງຍາກ ຫລາຍຢ່າງ , ລາວຈຶ່ງ ຕັດສິນໃຈ ກັບຄືນເມືອ ຫາພວກລູກໆ ທີ່ ຄອງຖ້າຢູ່ບ້ານ .

ຕອນນັ້ນເປັນຊ່ວງລະດູຫນາວ ທີ່ມີລົມພະຍຸຫິມະພັດແຮງບໍ່ຂາດສາຍ,ພໍ່ຄ້າຜູ້ນັ້ນໄດ້ອອກເດີນທາງ ໂດຍບໍ່ຊ້າ .

ພໍເດີນທາງໄປໄດ້ດົນເຕີບ, ພໍ່ຄ້າຜູ້ນັ້ນ ຮູ້ສຶກເຫມື່ອຍ, ອ່ອນເພຍ ແລະ ຫນາວຫລາຍ, ແຕ່ໄລຍະ ທາງ ກໍຍັງພຽງແຕ່ 4 ຫາ 5 ຫລັກ ກໍຈະເຖິງບ້ານແລ້ວ, ລາວຮູ້ດີ ວ່າ ຖ້າເດີນທາງຜ່ານປ່າໄມ້ໄປອີກ ປະມານ ສອງຊົ່ວໂມງ ກໍຈະເຖິງບ້ານແມ່ນອນ , ລາວຈຶ່ງຕັດສິນໃຈ ເດີນທາງໄປຕໍ່ .

ເດີນທາງຜ່ານປ່າເຂົ້າໄປ ບໍ່ໄດ້ໄກປານໃດທ້ອງຟ້າ ກໍມືດຄໍ່າລົງ, ຫິມະ ທີ່ປົກຄຸມຫນ້າດິນຢ່າງ ດົກຫນາ ທັງມີນໍ້າກ້າມ ເຮັດໃຫ້ມ້າ ຂອງລາວ

ຖືກບາດຕີນໄປຫນ້າໄດ້ດ້ວຍຄວາມລຳບາກ. ໃນທີ່ສຸດມ້າຂອງລາວ ກໍບໍ່ສາມາດຖືກບາດຕີນໄປຕໍ່ໄດ້ຈັກບາດກ້າວ . ພໍ່ຄ້າຜູ້ນັ້ນແນມເຫັນຕົ້ນໄມ້ໃຫຍ່ຕົ້ນຫນຶ່ງທີ່ມີໂກນພໍດີຫລີມຕົວຂອງລາວ ຈຶ່ງເຂົ້າໄປຊຶ້ນພັກຢູ່ທີ່ນັ້ນຈົນຫມົດຄືນແຕ່ກໍນອນບໍ່ຫລັບຍ້ອນຫນາວປ່າຫອນຢູ່ໃກ້ໆເກືອບຫມົດຄືນ .

ພໍຮຸ່ງເຊົ້າເປັນມື້ໃຫມ່, ຫິມະທີ່ຕົກບໍ່ຂາດສາຍ ໄດ້ປົກເຕັມຫມົດທົ່ວເສັ້ນທາງຈົນພໍ່ຄ້າຜູ້ນັ້ນບໍ່ຮູ້ຈັກວ່າຈະເດີນທາງໄປຕໍ່ທາງໃດ . ແນມໄປມາດົນເຕີບ ລາວຈຶ່ງເຫັນຮອຍທີ່ພໍມີວໆ ຄ້າຍຄືກັບເສັ້ນທາງຄົນຜ່ານໄປມາ ຕ່າງແຕ່ວ່າເປັນທາງທີ່ມື່ນຫລາຍ ຈົນເຮັດໃຫ້ລາວ ແລະ ມ້າ ພາກັນລົ້ມລົງສູ່ພື້ນຫລາຍຄັ້ງ .



ທາງເສັ້ນນັ້ນໄດ້ພາລາວໄປຮອດບ່ອນທີ່ມີຕົ້ນຫມາກກ້ຽງເກີດເປັນແຖວຢູ່ສອງຟາກຂ້າງ. ສຸດທາງເສັ້ນນັ້ນມີຜາສາດງົດງາມຫລັງໃຫຍ່ຫລັງຫນຶ່ງຕັ້ງຢູ່ .



ພໍ່ຄ້າຜູ້ນັ້ນຮູ້ສຶກແປກໃຈຫລາຍທີ່ບໍ່ເຫັນຫິມະຕົກຢູ່ໃນບໍລິເວນແຖບທາງທີ່ມີຕົ້ນຫມາກກ້ຽງເກີດຢູ່ສອງຟາກຂ້າງ, ເຫັນແຕ່ດອກໄມ້ ແລະ

ຫມາກໄມ້ຢູ່ເຕັມຕົ້ນ. ຕອນລາວໄປຮອດເດີ່ນຜາສາດເດີ່ນທຳອິດ, ລາວເຫັນຂັ້ນໄດຫີນຍາວຢຽດ. ລາວຍ່າງຂຶ້ນຂັ້ນໄດ ແລະ ຜ່ານເຂົ້າໄປໃນຫລາຍຫ້ອງຂອງຜາສາດ ເຫັນວ່າມີເຄື່ອງເຮືອນຫລາຍຢ່າງຢູ່ໃນແຕ່ລະຫ້ອງ . ອາຍອຸ່ນຂອງອາກາດຢູ່ທີ່ນັ້ນໄດ້ເຮັດໃຫ້ລາວມີຄວາມຮູ້ສຶກວ່າມີຊີວິດຊີວາຂຶ້ນມາອີກໃຫມ່ . ພໍ່ຄ້າຜູ້ນັ້ນຮູ້ສຶກຫິວເຂົ້າຫລາຍແຕ່ລາວແນມຫາກໍບໍ່ມີໃຜຈັກຄົນຢູ່ໃນຜາສາດແຫ່ງນັ້ນ , ມີແຕ່ຄວາມມິດງຽບ ປານຫອຍໄຂ້ປົກຄຸມທົ່ວບໍລິເວນ .

ຫລັງຈາກຍ່າງເລາະລຽບເບິ່ງຫ້ອງຕ່າງໆ ມີທັງຫ້ອງເປົ່າ ແລະ ຫ້ອງໃຫຍ່ທີ່ເຕັມດ້ວຍຮູບພາບຫ້ອຍເທິງຝາ . ພໍ່ຄ້າຜູ້ນັ້ນ, ຮູ້ສຶກອິດເມື່ອຍຫລາຍຈຶ່ງຢຸດພັກ ຢູ່ຫ້ອງຫນຶ່ງທີ່ນ້ອຍກ່ວາຫມູ່ ແ ນມເຫັນກອງໄຟກຳລັງລຸກໄຫມ້ ໃຫ້ຄວາມອົບ ອຸ່ນແກ່ຫ້ອງນັ້ນ ແລະມີຕັ່ງຍາວຫນ່ວຍຫນຶ່ງປິ່ນຫນ້າໃສ່ເຕົາໄຟກອງນັ້ນ.







ພໍ່ຄ້າຜູ້ນັ້ນນັ່ງລົງເທິງຕັ່ງຍາວ ແລະ ຫລັບໄປແຕ່ຍາມໃດກໍບໍ່ຮູ້ເມື່ອຄີງ ຍ້ອນຄວາມອິດເມື່ອຍ ໂຫຍຫິວ .

ຫລາຍຊົ່ວໂມງຜ່ານໄປ, ລາວຍັງນັ່ງຫລັບຢູ່ບ່ອນນັ້ນພຽງຄືນດຽວ, ພໍຕື່ນຂຶ້ນມາ ລາວແນມເຫັນມີໂຕະນ້ອຍໜ່ວຍໜຶ່ງຢູ່ໃກ້ໆໂຕຂອງລາວ, ຢູ່ເທິງໂຕະນ້ອຍໜ່ວຍນັ້ນມີອາຫານແລງສາມສີ່ຢ່າງວາງໄວ້; ກິ່ນຫອມຂອງອາຫານຕ້ອງໃສ່ດັງຂອງພໍ່ຄ້າຜູ້ນັ້ນເຮັດໃຫ້ລາວອົດທົນບໍ່ໄດ້ດົນ, ລາວຈຶ່ງຟ້າວກິນອາຫານຢ່າງໄວວາ, ຄິດໃນໃຈວ່າຂໍໃຫ້ໄດ້ກິນອີ່ມທ້ອງກ່ອນຈຶ່ງຈະຂອບໃຈເຈົ້າຂອງຜູ້ແຕ່ງອາຫານມາໃຫ້ ເຊິ່ງລາວເອງກໍຍັງບໍ່ທັນຮູ້ວ່າແມ່ນຜູ້ໃດເປັນເຈົ້າຂອງຜາສາດຫລັງໃຫຍ່ແຫ່ງນັ້ນ.

ກິນອາຫານແລງແລ້ວບໍ່ໄດ້ດົນ, ພໍ່ຄ້າຜູ້ນັ້ນກໍລົ້ມຕົວລົງນອນຢູ່ຕັ່ງຍາວໜ່ວຍນັ້ນຕື່ມອີກໄດ້ຫລາຍຊົ່ວໂມງ, ບາດຮູ້ເມື່ອຄີງຂຶ້ນມາ ລາວປະກົດວ່າ ມີເຫື່ອມີແຮງເປັນປົກະຕິ.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ